ສຳນັກງານ ຄຄຊ
ເລກທີ...03........
ວັນທີ...02 JAN 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 52 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 31 ທັນວາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈໍາອາທິດທີ 03-07/12/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,04% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດຊະນີຂອງຂະແໜງອຸດສາຫະກໍາ ເພີ່ມຂຶ້ນຢູ່ໃນລະດັບ 59,3% ໃນເດືອນ 11/2018 ຊຶ່ງສູງກວ່າຄາດຄະເນໄວ້ວ່າຈະຢູ່ທີ່ລະດັບ 57,5% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກຈໍານວນປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງ ຫຼຸດລົງຢູ່ໃນລະດັບ 1,63 ລ້ານຄົນ ໃນອາທິດທີ 24/11/2018 ຈາກຈໍານວນ 1,70 ລ້ານຄົນ ໃນອາທິດທີ່ຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 26-30/11/2018 | ອາທິດນີ້ 03-07/12/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1370 | 1,1365 | 0,04% |
| ເຢນ/ໂດລາ | 113,49 | 112,83 | 0,58% |
| ບາດ/ໂດລາ | 32,880 | 32,800 | 0,24% |
| ເປໂຊ/ໂດລາ | 52,41 | 52,77 | -0,67% |
| ຣູເປັຍ/ໂດລາ | 14.300,00 | 14.465,00 | -1,14% |
| ໂດລາສິງກະໂປ/ໂດລາ | 1,3709 | 1,3695 | 0,10% |
| ຢວນ/ໂດລາ | 6,9438 | 6,8814 | 0,91% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຄົງທີ່ຢູ່ໃນລະດັບ 50,92 ໂດລາ/ບາເຣວ ເຖິງວ່າຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ຫຼຸດລົງມາຢູ່ໃນລະດັບ 7,32 ລ້ານບາເຣວ ໃນອາທິດທີ 30/11/2018 ຈາກເພີ່ມຂຶ້ນຮອດລະດັບ 3,58 ລ້ານບາເຣວ ໃນອາທິດຜ່ານມາ ແຕ່ ສະຫະລັດອາເມລິກາ ໄດ້ກັບມາເປັນຜູ້ສົ່ງອອກນ້ຳມັນດິບ ແລະ ນ້ຳມັນສຳເລັດຮູບສຸດທິ ຄັ້ງທຳອິດໃນຮອບ 45 ປີ ຊຶ່ງສົ່ງອອກນ້ຳມັນດິບເພີ່ມຂຶ້ນ ແລະ ສູງສຸດຢູ່ທີ່ລະດັບ 3,2 ລ້ານບາເຣວ/ວັນ;
- ລາຄາຄຳ ເພີ່ມຂຶ້ນ 1,39% ເປັນ 1.239,81 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ແຂງຄ່າຂຶ້ນ 0,19% ແຕ່ອ່ອນຄ່າລົງ 0,07% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,61% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,11% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 26-30/11/2018 | | | ອາທິດນີ້ 03-07/12/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.628,23 | 8.650,98 | 8.639,91 | 8.608,65 | 8.640,01 | 8.623,86 | 0,23% | 0,13% | 0,19% | -3,57% | -3,62% | -3,61% |
| ບາດ | 266,42 | 267,43 | 266,96 | 266,45 | 267,56 | 267,13 | -0,01% | -0,05% | -0,07% | -4,28% | -4,04% | -4,11% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,77% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 13,21%;
- ປະລິມານເງິນ M2 ຫຼຸດລົງ 0,09% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,39%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (30/11-06/12/2018) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 7,21 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 31,17 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 23,96 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 300,47 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 345,56 ລ້ານບາດ ແລະ ຂາຍເງິນບາດໄດ້ 646,03 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ເພີ່ມຂຶ້ນ 2,89% ແລະ ເງິນບາດ ເພີ່ມຂຶ້ນ 21,58%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດູດຊຶມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 6,62 ລ້ານໂດລາ ແລະ ດູດຊຶມໂດຍການຂາຍເງິນບາດສຸດທິ ຈຳນວນ 70,06 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,40 ລ້ານໂດລາ ແລະ ເງິນບາດ ຈຳນວນ 70,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 23-29/11/2018 | | ອາທິດນີ້ 30/11-06/12/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. <u>ການຊື້ເງິນຕາຕ່າງປະເທດ</u> | **31,64** | **168,25** | **31,17** | **345,56** | **-1,49%** | **105,38%** |
| - ທ/ຄທຸລະກິດລັດ | 12,56 | 90,65 | 9,12 | 158,96 | -27,39% | 75,36% |
| - ທ/ຄທຸລະກິດອື່ນໆ | 19,08 | 77,60 | 22,05 | 186,60 | 15,57% | 140,46% |
| 2. <u>ການຂາຍເງິນຕາຕ່າງປະເທດ</u> | **21,94** | **647,32** | **23,96** | **646,03** | **9,21%** | **-0,20%** |
| - ທ/ຄທຸລະກິດລັດ | 12,23 | 160,68 | 12,25 | 202,33 | 0,16% | 25,92% |
| - ທ/ຄທຸລະກິດອື່ນໆ | 9,71 | 486,64 | 11,71 | 443,70 | 20,60% | -8,82% |
| <u>ຊື້-ຂາຍສຸດທິ ທທກ</u> | **9,70** | **-479,07** | **7,21** | **-300,47** | **-25,67%** | **-37,28%** |
| - ຜົດດ່ຽງຊື້-ຂາຍ | 30,66% | -284,74% | 23,13% | -86,95% | -24,56% | -69,46% |
| - ມູນຄ່າການຊື້-ຂາຍ | **53,58** | **815,57** | **55,13** | **991,59** | **2,89%** | **21,58%** |
| 3. <u>ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ</u> | **-4,19** | **-22,40** | **-6,62** | **-70,06** | | |
| - ທຫລ ຊື້ຈາກ ທທກ | 0,90 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 5,09 | 22,40 | 6,62 | 70,06 | | |
| 4. <u>ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ</u> | **3,72** | **21,00** | **3,40** | **70,00** | | |
| 5. <u>ທຫລ ກັບ ພາກສ່ວນອື່ນໆ</u> | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 <u>ສະພາບອັດຕາເງິນເຟີ້</u>**

ອັດຕາເງິນເຟີ້ໃນເດືອນ 12/2018 ຄາດວ່າຈະຢູ່ໃນລະດັບ 2,04%.

**2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ</u>**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 35,26 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (30/11-06/12/2018) ໃນນັ້ນ, ສຳລັບກະແສເງິນໄຫຼອອກ ມີຈຳນວນ 134,33 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 97,64 ລ້ານໂດລາສະຫະລັດ, ລາຍຈ່າຍອື່ນໆ ຈຳນວນ 17,19 ລ້ານໂດລາສະຫະລັດ ແລະ ຈ່າຍຄ່າບໍລິການ ຈຳນວນ 7,98 ລ້ານໂດລາສະຫະລັດ), ສຳລັບກະແສເງິນໄຫຼເຂົ້າ ແມ່ນມີຈຳນວນ 99,06 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 47,83 ລ້ານໂດລາສະຫະລັດ, ຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 22,16 ລ້ານໂດລາສະຫະລັດ ແລະ ຈາກການໃຫ້ບໍລິການ ຈຳນວນ 22,16 ລ້ານໂດລາສະຫະລັດ).

**3. <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 518 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 141 ສະບັບ ເທົ່າກັບ 21,40% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 426,27 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 56,32 ຕື້ກີບ ເທົ່າກັບ 15,22%.

• ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (30/11-06/12/2018) ມີທັງໝົດ 3.919 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈໍານວນ 3.755 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈໍານວນ 342 ຕື້ກີບ ຈາກ 1.516,30 ຕື້ກີບ ມາເປັນ 1.174,73 ຕື້ກີບ ເທົ່າກັບ 22,52%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈໍານວນ 164 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈໍານວນ 94,48 ຕື້ກີບ ຈາກ 190,79 ຕື້ກີບ ມາເປັນ 96,31 ຕື້ກີບ ເທົ່າກັບ 49,52%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 825,44 ຈຸດ ຫຼຸດລົງ ຈາກ 827,43 ຈຸດ ຫຼື ເທົ່າກັບ 0,24% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 97.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 465.745 ລ້ານກີບ ຫຼຸດລົງ 73,01% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 30,16% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PTL.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈໍານວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 101.500 | 560.960.000 | 5.550 | **63.500** | **349,525,000** | **5.550** | -37.44 | -37.69 | - |
| **EDL-GEN** | 273.400 | 1.093.610.000 | 4.000 | **26.300** | **105.170.000** | **4.000** | -90,38 | -90,38 | - |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | 300 | 450.000 | 1.500 | **1.200** | **1.700.000** | **1.400** | 300 | 277,78 | -6,67 |
| **SVN** | - | - | 1.650 | - | - | **1.650** | - | - | - |
| **PCD** | 100 | 120.000 | 1.200 | - | - | **1.200** | -100 | -100 | - |
| **LCC** | 1.000 | 1.700.000 | 1.700 | - | - | **1.700** | -100 | -100 | - |
| **MHTL** | 24.100 | 68.140.000 | 2.900 | **2.100** | **5.990.000** | **2.900** | -91,29 | -91,21 | - |
| **LAT** | 1.000 | 700.000 | 700 | **4.800** | **3.360.000** | **700** | 380 | 380 | - |
| **ທັງໝົດ** | 401.400 | 1.725.680.000 | | **97.900** | **465.745.000** | | -75,61 | -73,01 | |

## 5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສໍາເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມສະໄໝສາມັນ ເທື່ອທີ່ 6 ຂອງສະພາແຫ່ງຊາດ ຊຸດທີ VIII ຜ່ານຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ), ❷ ກອງປະຊຸມສ່ອງແສງສາຍລັດ ປະຈໍາເດືອນ ພະຈິກ 2018, ❸ ກອງປະຊຸມປຶກສາຫາລືກ່ຽວກັບບັນຫາເສດຖະກິດມະຫາພາກ ເພື່ອກະກຽມເນື້ອໃນ ໃນການເຮັດວຽກກັບຄະນະຊ່ຽວຊານຂອງປະເທດ ສສ ຫວຽດນາມ ແລະ ກອງປະຊຸມຫາລື ກ່ຽວກັບການສ້າງຕັ້ງສະມາຄົມປະເມີນມູນຄ່າຊັບສິນ ຮ່ວມກັບບໍລິສັດປະເມີນມູນຄ່າຊັບສິນ 03 ແຫ່ງ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ, ❺

ຈັດກອງປະຊຸມສຳມະນາໃນຫົວຂໍ້: "ວຽກງານການເງິນ ແລະ ຫຼັກການບັນຊີທະນາຄານແຫ່ງ ສປປ ລາວ" ແລະ ຈັດພິທີປາຖະກະຖາລະນຶກວັນສາກົນເພື່ອລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ດັກຍິງ 25 ພະຈິກ.

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ທ່ານ Jonathan C.Dunn ຜູ້ຕາງໜ້າຫ້ອງການ IMF ປະຈຳ ສປປ ລາວ ແລະ ສສ. ຫວຽດນາມ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບັ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າ ນຳສະເໜີແຜນພິມເງິນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈຳປີ 2019 ທີ່ໄດ້ກຳນົດໄວ້;
- ສືບຕໍ່ກະກຽມເງື່ອນໄຂໃຫ້ແກ່ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປີ 2018.
- ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:❶ ກອງປະຊຸມທ່ານນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ທັນວາ 2018; ❷ ກອງປະຊຸມສຳມະນາຂະແໜງການເງິນອາຊຽນ +3 ປະຈຳປີ 2018 (ATFF) ແລະ ກອງປະຊຸມຮອງລັດຖະມົນຕີການເງິນ ແລະ ຮອງຜູ້ວ່າທະນາຄານກາງອາຊຽນ +3; ❸ກອງປະຊຸມເປີດກວ້າງທາບທາມຮ່າງດຳລັດວ່າດ້ວຍ ສູນຂໍ້ມູນຂ່າວສານສິນເຊື່ອ CIB; ❹ ກອງປະຊຸມປຶກສາຫາລືກ່ຽວກັບການຮ່າງ ນິຕິກຳລຸ່ມກົດໝາຍວ່າດ້ວຍລະບົບການຊຳລະ; ❺ ກອງປະຊຸມຄະນະປັບປຸງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ; ❻ ກອງປະຊຸມຄະນະຄົ້ນຄວ້າຮ່າງດຳລັດວ່າດ້ວຍວຽກງານການບັນຊີ ແລະ ການເງິນຂອງ ທຫລ ແລະ ❼ ກອງປະຊຸມຮ່ວມມືສອງຝ່າຍລະຫວ່າງ ສຄຕຊ ແລະ ຄຄຊທສສ. ຫວຽດນາມຄັ້ງນີ້.
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບທ່ານ ຮອງປະທານທະນາຄານ SacomBank; ເອກະອັກຄະລັດຖະທູດຍີ່ປຸ່ນປະຈຳ ສປປ ລາວ ແລະ ປະທານບໍລິສັດ BNK ເຊົ່າສິນເຊື່ອ.

ຮອງ ຫົວໜ້າຫ້ອງການ

ຫ້ອງການ

ພຸນມະລີ ສີຣິພົນເດດ